**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດໂຄວິດ 19

ເລກທີ 0323 /ອຄ.ກອຫ
ນະຄອນຫຼວງວຽງຈັນ, ວັນທີ 26 ເມສາ 2021

## ແຈ້ງການ

**ເຖິງ** : - ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ປະທານສະມາຄົມອຸດສາຫະກຳຕັດຫຍິບ ແຫ່ງຊາດລາວ
- ຜູ້ອຳນວຍການໂຮງງານຕັດຫຍິບ ແລະ ໂຮງງານຜະລິດເກີບ ໃນຂອບເຂດທົ່ວປະເທດ.

**ເລື່ອງ**: ຢຸດເຊົາຊົ່ວຄາວການດຳເນີນກິດຈະການໂຮງງານຕັດຫຍິບ ແລະ ໂຮງງານຜະລິດເກີບ ເພື່ອສະກັດກັ້ນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ 19.

- ອີງຕາມຄຳສັ່ງນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມແຈ້ງການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເລກທີ 0310/ອຄ.ກອຫ, ລົງວັນທີ 23 ເມສາ 2021.
- ອີງຕາມທິດຊີ້ນຳຂອງຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ..................................

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ໂຮງງານຕັດຫຍິບ ແລະ ໂຮງງານຜະລິດກີບ ຢຸດເຊົາຊົ່ວຄາວການດຳເນີນກິດຈະການໂຮງງານຈົນຮອດວັນທີ 5 ພຶດສະພາ 2021 ເພື່ອສະກັດກັ້ນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ 19. ຍົກເວັ້ນໂຮງງານທີ່ນຳໃຊ້ສະເພາະກຳມະກອນ ຢູ່ຫໍພັກໃນຂອບເຂດໂຮງງານ;
2. ໃຫ້ໂຮງງານທີ່ສືບຕໍ່ດຳເນີນກິດຈະການໂຮງງານ ຫຼື ຢຸດເຊົາຊົ່ວຄາວ ສືບຕໍ່ປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ 19 ຢ່າງເຂັ້ມງວດ.
3. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ ວັນທີ 27 ເມສາ 2021 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດດ້ວຍ.

**ຮອງລັດຖະມົນຕີ**
**ຫົວໜ້າຄະນະສະເພາະກິດ**

**ສົມຈິດ ອິນທະມິດ**